**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາບໍລິຫານ ສຳນັກງານປົກປ້ອງເງິນຝາກ ເລກທີ 02 /ສພບ.ສປງ

ນະຄອນຫຼວງວຽງຈັນ, ວັນທີ 29 **ເມສາ 2022**

# ຄຳແນະນຳ
# ກ່ຽວກັບການຈ່າຍເງິນປົກປ້ອງ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມ ດຳລັດວ່າດ້ວຍການປົກປ້ອງເງິນຝາກ ສະບັບເລກທີ 329/ລບ, ລົງວັນທີ 25 ຕຸລາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສຳນັກງານປົກປ້ອງເງິນຝາກ ສະບັບເລກທີ 68/ທຫລ, ລົງວັນທີ 22 ມັງກອນ 2019.

## ປະທານສະພາບໍລິຫານ ອອກຄຳແນະນຳ:

**I.ຈຸດປະສົງ**

ຄຳແນະນຳສະບັບນີ້ ຜັນຂະຫຍາຍ ແລະ ແນະນຳການຈັດຕັ້ງປະຕິບັດເນື້ອໃນບາງມາດຕາຂອງ ດຳລັດວ່າດ້ວຍການປົກປ້ອງເງິນຝາກ ສະບັບເລກທີ 329/ລບ, ລົງວັນທີ 25 ຕຸລາ 2017 ເປັນຕົ້ນຂອບເຂດການນຳໃຊ້ດຳລັດ , ການອະທິບາຍຄຳສັບ, ການແບ່ງຄວາມຮັບຜິດຊອບໃນການຈ່າຍເງິນປົກປ້ອງ, ຂັ້ນຕອນການຈ່າຍເງິນປົກປ້ອງ, ການຈັດຕັ້ງປະຕິບັດ ແລະ ເນື້ອໃນອື່ນຂອງດຳລັດດັ່ງກ່າວ ໃຫ້ມີຄວາມລະອຽດ ແລະ ຈະແຈ້ງຂຶ້ນຕື່ມ ແນໃສ່ເຮັດໃຫ້ການຈ່າຍເງິນປົກປ້ອງ ມີຄວາມສອດຄ່ອງ, ຖືກຕ້ອງ ແລະ ວ່ອງໄວ ທັນກັບສະພາບການ ພາຍຫຼັງທີ່ທະນາຄານແຫ່ງ ສປປ ລາວ ແຈ້ງການໃຫ້ສຳນັກງານປົກປ້ອງເງິນຝາກ ດຳເນີນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ.

**II. ການອະທິບາຍຄຳສັບ**

1. **ສະຖາບັນການເງິນ** ໝາຍເຖິງ ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

2. **ສະມາຊິກ** ໝາຍເຖິງ ສະຖາບັນການເງິນ ທີ່ເປັນສະມາຊິກຂອງ ສຳນັກງານປົກປ້ອງເງິນຝາກ;

3. **ເງິນຝາກ** ໝາຍເຖິງ ຈຳນວນເງິນໃນບັນຊີຂອງຜູ້ຝາກເງິນ ທີ່ຝາກໄວ້ນຳສະມາຊິກ;

4. **ຜູ້ຝາກເງິນ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເອົາເງິນຂອງຕົນມາຝາກໄວ້ນຳ ສະມາຊິກ;

5. **ເງິນຝາກທີ່ໄດ້ຮັບການປົກປ້ອງ** ໝາຍເຖິງ ເງິນຝາກຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຝາກໄວ້ນຳສະມາຊິກ. ເງິນຝາກດັ່ງກ່າວ ປະກອບດ້ວຍເງິນຝາກ ກະແສລາຍວັນ, ປະຢັດ ແລະ ມີກຳນົດ ທີ່ເປັນສະກຸນເງິນກີບ ແລະ ສະກຸນເງິນຕາຕ່າງປະເທດ ລວມທັງຕົ້ນທຶນ ແລະ ດອກເບ້ຍ ຍົກເວັ້ນ ເງິນຝາກທີ່ບໍ່ໄດ້ຮັບການປົກປ້ອງ ຕາມການກຳນົດ ໃນຂໍ້ທີ 6 ຂ້າງລຸ່ມນີ້;

6. **ເງິນຝາກທີ່ບໍ່ໄດ້ຮັບການປົກປ້ອງ** ໝາຍເຖິງ ເງິນຝາກທີ່ບໍ່ມີເງື່ອນໄຂໄດ້ຮັບການປົກປ້ອງ ດັ່ງລຸ່ມນີ້:

6.1 **ເງິນຝາກຂອງຜູ້ບໍລິຫານ** ໝາຍເຖິງ ເງິນຝາກຂອງ ສະມາຊິກສະພາບໍລິຫານ, ຄະນະອໍານວຍການ, ຫົວໜ້າພະແນກ ແລະ ຫົວໜ້າສາຂາຂອງ ສະຖາບັນການເງິນເອງ ຫຼື ຜູ້ມີຕໍາແໜ່ງທຽບເທົ່າ ທີ່ໄດ້ຮັບນະໂຍບາຍເທົ່າກັບຕໍາແໜ່ງຜູ້ບໍລິຫານທີ່ກ່າວມານັ້ນ;

6.2 **ເງິນຝາກຂອງຜູ້ຖືຮຸ້ນລາຍໃຫຍ່** ໝາຍເຖິງ ເງິນຝາກຂອງ ຜູ້ຖືຮຸ້ນ ແຕ່ສິບສ່ວນຮ້ອຍ (10%) ຂຶ້ນໄປ ຂອງຈໍານວນຮຸ້ນທັງໝົດ ທີ່ສາມາດລົງຄະແນນສຽງໄດ້;

6.3 **ເງິນຝາກຂອງສະຖາບັນການເງິນອື່ນ** ໝາຍເຖິງ ເງິນຝາກຂອງ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ໂຮງຊວດຈໍາ, ບໍລິສັດເຊົ່າສິນເຊື່ອ ແລະ ສະຖາບັນການເງິນອື່ນ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

6.4 **ເງິນຝາກຄັງເງິນແຫ່ງຊາດ** ໝາຍເຖິງ ເງິນຝາກຂອງການຈັດຕັ້ງບໍລິຫານວິຊາການ ທີ່ຄຸ້ມຄອງບໍລິຫານເງິນຂອງລັດໃຫ້ລວມສູນເຂົ້າບັນຊີຄັງເງິນແຫ່ງຊາດ ຕາມລະບົບສາຍຕັ້ງໃນຂອບເຂດທົ່ວປະເທດ;

6.5 **ເງິນຝາກຂອງອົງການຈັດຕັ້ງລັດ** ໝາຍເຖິງ ເງິນຝາກຂອງ ອົງການຈັດຕັ້ງພັກ-ລັດ ແລະ ອົງການຈັດຕັ້ງມະຫາຊົນ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ເຊັ່ນ: ສະພາແຫ່ງຊາດ, ລັດຖະບານ, ສະພາປະຊາຊົນ ແລະ ອໍານາດການປົກຄອງທ້ອງຖິ່ນ (ຂັ້ນແຂວງ, ເມືອງ ແລະ ບ້ານ), ສານປະຊາຊົນຂັ້ນຕ່າງໆ, ອົງການໄອຍະການປະຊາຊົນຂັ້ນຕ່າງໆ, ສະຖານທູດ ຫຼື ສະຖານກົງສູນຂອງ ສປປ ລາວ ທີ່ປະຈໍາຢູ່ຕ່າງປະເທດ;

6.6 **ເງິນຝາກຂອງອົງການຈັດຕັ້ງສາກົນ** ໝາຍເຖິງ ເງິນຝາກຂອງ ອົງການຈັດຕັ້ງ ຫຼື ພາກສ່ວນ ທີ່ຂຶ້ນກັບຕ່າງປະເທດ ແຕ່ມີທີ່ຕັ້ງສໍານັກງານ ຢູ່ ສປປ ລາວ ເຊັ່ນ: ສະຖານທູດຂອງຕ່າງປະເທດທີ່ປະຈໍາຢູ່ ສປປ ລາວ, ສະຫະປະຊາຊາດ (UN), ກຸ່ມທະນາຄານໂລກ (WBG), ທະນາຄານພັດທະນາອາຊີ (ADB), ກອງທຶນການເງິນສາກົນ (IMF), ອົງການທີ່ບໍ່ຂຶ້ນກັບລັດຖະບານ (NGO), ອົງການເພື່ອພັດທະນາແມ່ຍິງ ແລະ ເດັກນ້ອຍ (UNICEF), ອົງການຊ່ວຍເຫຼືອລ້າ (JICA ແລະ KOICA), ອົງການເກັບກູ້ລະເບີດ (UXO) ແລະ ອົງການຈັດ ຕັ້ງສາກົນອື່ນ;

6.7 **ເງິນຝາກສໍາລັບຊື້-ຂາຍຫຼັກຊັບ** ໝາຍເຖິງ ເງິນຝາກຂອງບຸກຄົນ ແລະ ນິຕິບຸກຄົນ ທີ່ເຮັດທຸລະກໍາຊື້-ຂາຍຮຸ້ນ ໃນຕະຫຼາດຫຼັກຊັບລາວ.

7. **ຈໍານວນເງິນປົກປ້ອງ** ໝາຍເຖິງ ຈໍານວນເງິນຝາກ ລວມທັງຕົ້ນທຶນ ແລະ ດອກເບ້ຍທີ່ຍັງເຫຼືອໃນວັນສຸດທ້າຍຂອງການດໍາເນີນທຸລະກິດຂອງສະມາຊິກ ທີ່ຢູ່ໃນສະພາວະລົ້ມລະລາຍ ຊຶ່ງເປັນຈໍານວນເງິນທີ່ໄດ້ຮັບການປົກປ້ອງ ແລະ ນອນຢູ່ ໃນວົງເງິນປົກປ້ອງທີ່ໄດ້ກໍານົດໄວ້ ໃນວັນສຸດທ້າຍຂອງການດໍາເນີນທຸລະກິດ;

8. **ຈໍານວນເງິນໃນການຈ່າຍເງິນປົກປ້ອງ** ໝາຍເຖິງ ຈໍານວນເງິນປົກປ້ອງ ທີ່ໄດ້ມີການຫັກລົບໜີ້ສິນທີ່ຍັງເຫຼືອ, ໜີ້ຕ້ອງຈ່າຍ ຫຼື ເງິນວາງຄໍ້າປະກັນທີ່ຜູ້ຝາກເງິນ ວາງໄວ້ກັບສະມາຊິກທີ່ລົ້ມລະລາຍ ລວມທັງ ດອກເບ້ຍ ແລະ ຄ່າທໍານຽມຕ່າງໆ ທີ່ຕິດພັນກັບບັນດາໜີ້ສິນເຫຼົ່ານີ້ ຊຶ່ງສໍານັກງານປົກປ້ອງເງິນຝາກ ຈະຕ້ອງຈ່າຍໃຫ້ຜູ້ຝາກເງິນທີ່ໄດ້ຮັບການປົກປ້ອງ ຂອງສະມາຊິກທີ່ລົ້ມລະລາຍຕາມວົງເງິນປົກປ້ອງສູງສຸດ;

9. **ວົງເງິນປົກປ້ອງ** ໝາຍເຖິງ ຈໍານວນເງິນທີ່ທະນາຄານແຫ່ງ ສປປ ລາວ ໄດ້ກໍານົດໄວ້ ຊຶ່ງເປັນຈໍານວນເງິນສູງສຸດທີ່ສໍານັກງານປົກປ້ອງເງິນຝາກ ຕ້ອງຈ່າຍໃຫ້ຜູ້ຝາກເງິນທີ່ໄດ້ຮັບການປົກປ້ອງ;

**10. ຄະນະຄວບຄຸມ** ໝາຍເຖິງຄະນະກຳມະການ ທີ່ໄດ້ຮັບການແຕ່ງຕັ້ງຈາກ ທະນາຄານແຫ່ງ ສປປ ລາວ ໃຫ້ເຂົ້າຄວບຄຸມທະນາຄານທີ່ຖືກປິດກິດຈະການ ຕາມສິດທີ່ໄດ້ກຳນົດໄວ້ໃນມາດຕາ 78 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ);

**11. ຄະນະຮັບຜິດຊອບຈ່າຍເງິນປົກປ້ອງ** ໝາຍເຖິງ ຄະນະກຳມະການທີ່ໄດ້ຮັບການແຕ່ງຕັ້ງ ໂດຍສະພາບໍລິຫານ ຂອງສຳນັກງານປົກປ້ອງເງິນຝາກ ເພື່ອດຳເນີນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ ທີ່ຝາກໄວ້ນຳສະມາຊິກ ທີ່ຢູ່ໃນສະພາວະລົ້ມລະລາຍ.

## III. ຄວາມຮັບຜິດຊອບໃນການຈ່າຍເງິນປົກປ້ອງ

### 1. ສຳນັກງານປົກປ້ອງເງິນຝາກ

ພາຍຫຼັງໄດ້ຮັບແຈ້ງການຈາກທະນາຄານແຫ່ງ ສປປ ລາວ ໃຫ້ສຳນັກງານປົກປ້ອງເງິນຝາກ ດຳເນີນການຈ່າຍເງິນປົກປ້ອງ, ສຳນັກງານປົກປ້ອງເງິນຝາກ ຕ້ອງກະກຽມຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນທີ່ໄດ້ຮັບການປົກປ້ອງ ຕາມວົງເງິນປົກປ້ອງ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດໄວ້ໃນລະບຽບການ ໂດຍດຳເນີນຕາມຂັ້ນຕອນດັ່ງນີ້:

1.1 ສະເໜີ ປະທານສະພາບໍລິຫານ ສຳນັກງານປົກປ້ອງເງິນຝາກ ແຕ່ງຕັ້ງຄະນະຮັບຜິດຊອບຈ່າຍເງິນປົກປ້ອງ ເພື່ອດຳເນີນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ;

1.2 ປະກາດໃຫ້ຜູ້ຝາກເງິນ ຊາບກ່ຽວກັບການຂໍຮັບເງິນປົກປ້ອງ.

### 2. ຄະນະຮັບຜິດຊອບຈ່າຍເງິນປົກປ້ອງ

ຄະນະຮັບຜິດຊອບຈ່າຍເງິນປົກປ້ອງ ມີໜ້າທີ່ດັ່ງນີ້:

**2.1** ກະກຽມແຜນການຮອບດ້ານໃນການຈ່າຍເງິນປົກປ້ອງ ໂດຍສະເພາະແຜນການເຄື່ອນໄຫວວຽກງານ, ສິ່ງອຳນວຍຄວາມສະດວກຕ່າງໆ, ງົບປະມານ, ການກະກຽມຄວາມພ້ອມໃນການຈ່າຍ, ຄວາມຕ້ອງການທາງດ້ານທຶນ ແລະ ແຫຼ່ງທຶນ ແລະ ກຳນົດເວລາໃນການຈ່າຍເງິນປົກປ້ອງ ໃຫ້ແກ່ຜູ້ຝາກເງິນ;

**2.2** ປະສານຂໍຄວາມຮ່ວມມືກັບບັນດາອຳນາດການປົກຄອງທີ່ກ່ຽວຂ້ອງ ເພື່ອຮັບປະກັນໃຫ້ຂັ້ນຕອນການຈ່າຍເງິນປົກປ້ອງ ມີຄວາມເປັນລະບຽບຮຽບຮ້ອຍ ແລະ ຖືກຕ້ອງຕາມລະບຽບການ;

**2.3** ປະສານສົມທົບກັບຄະນະຄວບຄຸມ ທຫລ ຢ່າງໃກ້ຊິດໃນການເກັບກຳຂໍ້ມູນ ແລະ ດຳເນີນການຈ່າຍເງິນປົກປ້ອງ;

**2.4** ຮັບ ແລະ ດຳເນີນການກວດກາເອກະສານສະເໜີຂໍຮັບເງິນປົກປ້ອງຈາກຜູ້ຝາກເງິນ;

**2.5** ກຳນົດຈຳນວນເງິນທີ່ຕ້ອງຈ່າຍ ໃຫ້ແກ່ຜູ້ຝາກເງິນທີ່ໄດ້ຮັບການປົກປ້ອງ ຕາມວົງເງິນປົກປ້ອງທີ່ທະນາຄານແຫ່ງ ສປປ ລາວ ໄດ້ກຳນົດໄວ້ຕາມລະບຽບການ, ພາຍຫຼັງທີ່ໄດ້ດຳເນີນການ ດັ່ງລຸ່ມນີ້:

ກ) ກວດກາຄວາມຖືກຕ້ອງ ແລະ ໄລ່ລຽງຍອດເຫຼືອເງິນຝາກ ໂດຍອີງໃສ່ປຶ້ມບັນຊີເງິນຝາກຂອງຜູ້ຝາກເງິນ ແລະ ການບັນທຶກຂໍ້ມູນເງິນຝາກຂອງສະມາຊິກດັ່ງກ່າວ;

ຂ) ກວດກາຄວາມຖືກຕ້ອງ ແລະ ໄລ່ລຽງຍອດເຫຼືອເງິນກູ້ທີ່ຄ້າງຊຳລະ (ຕົ້ນທຶນ ແລະ ດອກເບ້ຍທີ່ຕ້ອງຈ່າຍ ແລະ ເງິນຄ້ຳປະກັນ ຂອງຜູ້ຝາກເງິນ ທີ່ຄ້ຳປະກັນໃຫ້ຜູ້ຝາກເງິນລາຍອື່ນ) ທີ່ຈະຕ້ອງຫັກລົບອອກຈາກຍອດເຫຼືອເງິນຝາກທັງໝົດ ຂອງຜູ້ຝາກເງິນດັ່ງກ່າວ;

ຄ) ກວດກາຄວາມຖືກຕ້ອງຂອງ CIF ຂອງຜູ້ຝາກເງິນ ແລະ ຜູ້ກູ້ຢືມແຕ່ລະລາຍ ເພື່ອຮັບປະກັນວ່າໄດ້ມີການກຳນົດລະຫັດ CIF ດຽວກັນ ໃຫ້ແກ່ຜູ້ຝາກເງິນ ແລະ ຜູ້ກູ້ຢືມແຕ່ລະລາຍ ສຳລັບການເຮັດທຸລະກຳເງິນຝາກ ແລະ ເງິນກູ້ກັບສະມາຊິກ.

2.6 ຢັ້ງຢືນຄວາມຖືກຕ້ອງ ຂອງການບັນທຶກຂໍ້ມູນເງິນຝາກທີ່ໄດ້ຮັບການປົກປ້ອງ, ຈຳນວນເງິນທີ່ຕ້ອງຫັກລົບ ແລະ ຈຳນວນເງິນໃນການຈ່າຍເງິນປົກປ້ອງ ສຳລັບຜູ້ຝາກເງິນທີ່ໄດ້ຮັບການປົກປ້ອງ;

2.7 ແຈ້ງການໃຫ້ສັງຄົມ ຊາບກ່ຽວກັບການຈ່າຍເງິນປົກປ້ອງ ຜ່ານຂ່າວປະຊາສຳພັນ ຫຼື ການສື່ສານໃນຮູບແບບອື່ນ ເພື່ອໃຫ້ເຂົ້າເຖິງຜູ້ຝາກເງິນໃຫ້ມີປະສິດທິພາບຍິ່ງຂຶ້ນ, ມີການໃຫ້ຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດການຈ່າຍເງິນປົກປ້ອງ ແລະ ປະກາດກ່ຽວກັບການສິ້ນສຸດຂັ້ນຕອນການຈ່າຍເງິນປົກປ້ອງ ພາຍຫຼັງສຳເລັດວຽກງານດັ່ງກ່າວ;

2.8 ເຮັດສັນຍາມອບໝາຍ ໃຫ້ສະຖາບັນການເງິນໃດໜຶ່ງເປັນຕົວແທນ ໃນການກະກຽມ ແລະ ຈ່າຍເງິນປົກປ້ອງ ຫຼື ດຳເນີນການກະກຽມຈ່າຍເງິນປົກປ້ອງໃນຮູບແບບອື່ນ;

2.9 ລາຍງານຢ່າງເປັນປົກກະຕິຕໍ່ຂັ້ນເທິງ ກ່ຽວກັບຄວາມຄືບໜ້າ ຂອງສະພາບການດຳເນີນການຈ່າຍເງິນປົກປ້ອງ, ຂໍ້ສະດວກ ແລະ ຫຍຸ້ງຍາກ, ວິທີການແກ້ໄຂບັນຫາ, ງົບປະມານ ແລະ ກຳນົດເວລາ;

2.10 ສະຫຼຸບລາຍງານຄັ້ງສຸດທ້າຍ ຕໍ່ຂັ້ນເທິງກ່ຽວກັບການດຳເນີນການຈ່າຍເງິນປົກປ້ອງ, ຈຳນວນເງິນປົກປ້ອງທີ່ໄດ້ຈ່າຍ, ສິ່ງທ້າທາຍທີ່ປະເຊີນ, ວິທີການແກ້ໄຂບັນຫາ, ບົດຮຽນທີ່ຖອດຖອນໄດ້ ແລະ ຂໍ້ສະເໜີໃນການປັບປຸງຄຳແນະນຳ ແລະ ຂັ້ນຕອນໃນການຈ່າຍເງິນປົກປ້ອງ.

**3. ຄະນະຄອບຄຸມ**

ພາຍຫຼັງໄດ້ຮັບແຈ້ງການຈາກທະນາຄານແຫ່ງ ສປປ ລາວ ໃຫ້ສຳນັກງານປົກປ້ອງເງິນຝາກ ດຳເນີນການຈ່າຍເງິນປົກປ້ອງ ໃຫ້ຜູ້ຝາກເງິນທີ່ໄດ້ຮັບການປົກປ້ອງ, ຄະນະຄອບຄຸມ ມີໜ້າທີ່ຮັບຜິດຊອບ ດັ່ງນີ້:

3.1 ສະໜອງບັນດາຂໍ້ມູນ ແລະ ເອກະສານ ໃຫ້ສຳນັກງານປົກປ້ອງເງິນຝາກ ພາຍໃນກຳນົດເວລາ 15 ວັນລັດຖະການ ຊຶ່ງລາຍລະອຽດມີດັ່ງລຸ່ມນີ້:

ກ) ຂໍ້ມູນທັງໝົດໃນວັນສຸດທ້າຍຂອງການດຳເນີນທຸລະກິດຂອງສະມາຊິກ ຕາມແບບພິມລາຍງານທີ່ສຳນັກງານປົກປ້ອງເງິນຝາກກຳນົດໄວ້;

ຂ) ເອກະສານຢັ້ງຢືນທັງໝົດ ທີ່ຕິດພັນກັບເງິນຝາກ ແລະ ເງິນກູ້ ພ້ອມທັງເອກະສານອື່ນຕາມການຮຽກຮ້ອງ ຂອງສຳນັກງານປົກປ້ອງເງິນຝາກ.

3.2 ການສັງລວມບັນຊີເງິນຝາກທັງໝົດ ຂອງຜູ້ຝາກເງິນ 01 ລາຍ ຕ້ອງອີງໃສ່ລະຫັດລູກຄ້າເງິນຝາກ ແລະ ເງິນກູ້ (CIF) ທີ່ສະມາຊິກກຳນົດ ເພື່ອໃຫ້ສາມາດຈຳແນກລູກຄ້າ ທີ່ນຳໃຊ້ເອກະສານຢັ້ງຢືນຕົວຕົນທີ່ແຕກຕ່າງກັນ ເພື່ອເປີດຫຼາຍບັນຊີ ເຊັ່ນ: ບັດປະຈຳຕົວ, ປຶ້ມສຳມະໂນຄົວ ແລະ ໜັງສືຜ່ານແດນ ເພື່ອຫຼີກເວັ້ນການຈ່າຍເງິນປົກປ້ອງຊໍ້າຊ້ອນໃຫ້ຜູ້ຝາກເງິນ 1 ລາຍ.

3.3 ສະໜອງຍອດເຫຼືອໜີ້ທັງໝົດຂອງລູກຄ້າ ໃຫ້ຖືກຕ້ອງ ໂດຍນຳໃຊ້ CIF ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ.

**4. ຜູ້ຝາກເງິນ**

4.1 ຜູ້ຝາກເງິນຕ້ອງຍື່ນເອກະສານຂໍຮັບເງິນປົກປ້ອງ ຈາກສຳນັກງານປົກປ້ອງເງິນຝາກ ໂດຍນຳໃຊ້ແບບພິມທີ່ໄດ້ກຳນົດໄວ້ ພ້ອມທັງປະກອບເອກະສານຢັ້ງຢືນທີ່ກ່ຽວຂ້ອງທັງໝົດ ເພື່ອໃຫ້ສຳນັກງານປົກປ້ອງເງິນຝາກ ສາມາດກວດກາຄວາມຖືກຕ້ອງຂອງເອກະສານ;

4.2 ຜູ້ຝາກເງິນ ຕ້ອງສະໜອງເອກະສານໃຫ້ສຳນັກງານປົກປ້ອງເງິນຝາກ ຢ່າງຄົບຖ້ວນ ແລະ ຖືກຕ້ອງເພື່ອເປັນການຢັ້ງຢືນການຮ້ອງຂໍຮັບເງິນປົກປ້ອງຂອງຕົນ ດັ່ງລາຍລະອຽດລຸ່ມນີ້:

ກ) ໃບຄຳຮ້ອງຂໍຮັບເງິນປົກປ້ອງ 01 ສະບັບ ຊຶ່ງສາມາດດາວໂຫຼດແບບພິມໄດ້ຈາກເວັບໄຊ ຂອງສຳນັກງານປົກປ້ອງເງິນຝາກ, ທະນາຄານແຫ່ງ ສປປ ລາວ, ສະຖາບັນການເງິນຕົວແທນໃນການ

ຈ່າຍເງິນປົກປ້ອງ ຫຼື ຊ່ອງທາງອື່ນ ຕາມທີ່ສຳນັກງານປົກປ້ອງເງິນຝາກໄດ້ກຳນົດໄວ້ (ເອກະສານຊ້ອນທ້າຍ 01);

ຂ) ໃບຢັ້ງຢືນທີ່ຢູ່ປັດຈຸບັນ ຕົ້ນສະບັບ 01 ສະບັບ;

ຄ) ສຳເນົາ ປຶ້ມສຳມະໂນຄົວ, ບັດປະຈຳຕົວ ຫຼື ໜັງສືຜ່ານແດນ ທີ່ຍັງມີອາຍຸການນຳໃຊ້ 01 ສະບັບ ພ້ອມດ້ວຍຕົ້ນສະບັບ;

ງ) ສຳເນົາປຶ້ມບັນຊີເງິນຝາກ ແລະ ເອກະສານຢັ້ງຢືນເງິນຝາກ ທຸກປະເພດ ແລະ ທຸກສະກຸນເງິນ ທີ່ຝາກໄວ້ນຳສະຖາບັນການເງິນທີ່ຢູ່ໃນສະພາວະລົ້ມລະລາຍ;

ຈ) ສຳເນົາປຶ້ມບັນຊີເງິນຝາກ ທີ່ເປີດໄວ້ນຳສະຖາບັນການເງິນຕົວແທນໃນການຈ່າຍເງິນປົກປ້ອງ (ຖືກແຕ່ງຕັ້ງໂດຍ ສປງ);

ສ) ສຳເນົາເອກະສານຢັ້ງຢືນຂໍ້ມູນໜີ້ ກັບສະມາຊິກ (ຖ້າມີ);

ຊ) ໃບມອບສິດ ທີ່ມີການຢັ້ງຢືນຈາກອົງການປົກຄອງບ້ານ ຕົ້ນສະບັບ 01 ສະບັບ ໃນກໍລະນີທີ່ຜູ້ຝາກເງິນບໍ່ສາມາດມາຍື່ນດ້ວຍຕົນເອງໄດ້;

ຍ) ໜັງສືຢັ້ງຢືນການເສຍຊີວິດ ຫຼື ໃບຢັ້ງຢືນການສືບທອດມູນມໍລະດົກ (ຖ້າຜູ້ຝາກເງິນເສຍຊີວິດ);

ດ) ເອກະສານອື່ນທີ່ເຫັນວ່າມີຄວາມຈຳເປັນໃນການຢັ້ງຢືນຄວາມຖືກຕ້ອງ ແລະ ຈຳນວນຂອງເງິນຝາກ ແລະ ເງິນກູ້ ແລະ ສິດ ໃນການໄດ້ຮັບເງິນປົກປ້ອງຂອງຜູ້ຝາກເງິນ ຕາມການຮຽກຮ້ອງຂອງ ສປງ.

**4.3** ຜູ້ຝາກເງິນ ຈະຕ້ອງຍື່ນຄຳຮ້ອງຂໍຮັບເງິນປົກປ້ອງ ຢູ່ສະຖານທີ່ ທີ່ສຳນັກງານປົກປ້ອງເງິນຝາກກຳນົດໄວ້ພາຍໃນ 90 ວັນ ນັບແຕ່ວັນທີ່ເລີ່ມປະກາດໃຫ້ມາຍື່ນຄຳຮ້ອງຂໍຮັບເງິນປົກປ້ອງ;

**4.4** ສຳລັບຄຳຮ້ອງ ທີ່ບໍ່ສາມາດຍື່ນໄດ້ພາຍໃນເວລາທີ່ກຳນົດໄວ້, ຜູ້ຝາກເງິນ ຈະຕ້ອງຍື່ນໜັງສືຄຳຮ້ອງດັ່ງກ່າວ ເພື່ອຂໍຮັບເອົາຕົ້ນທຶນ ແລະ ດອກເບ້ຍເງິນຝາກ ຕໍ່ຄະນະຊຳລະສະສາງ ທີ່ໄດ້ຮັບການແຕ່ງຕັ້ງ ໂດຍທະນາຄານແຫ່ງ ສປປ ລາວ;

**4.5** ໃນກໍລະນີ ຜູ້ຝາກເງິນບໍ່ມີບັນຊີເງິນຝາກ ຢູ່ສະຖາບັນການເງິນທີ່ເປັນຕົວແທນໃນການຈ່າຍເງິນປົກປ້ອງ, ຜູ້ຝາກເງິນ ຕ້ອງໄດ້ເປີດບັນຊີໃໝ່ຢູ່ສະຖາບັນການເງິນດັ່ງກ່າວ ເພື່ອສາມາດຮັບເງິນປົກປ້ອງໄດ້ທັນເວລາ;

**4.6** ເງິນຝາກທີ່ເກີນວົງເງິນປົກປ້ອງ ແລະ ເງິນຝາກທີ່ບໍ່ໄດ້ຮັບການປົກປ້ອງ ຜູ້ຝາກເງິນ ຕ້ອງຍື່ນຄຳຮ້ອງຂໍຮັບເງິນ ນຳຄະນະຊຳລະສະສາງ;

**4.7** ຜູ້ຝາກເງິນ ທີ່ຍັງມີພາລະໜີ້ຈະຕ້ອງຊຳລະໜີ້ຂອງຕົນ ໃຫ້ຄະນະຊຳລະສະສາງ.

## IV. ການກຳນົດເງື່ອນໄຂ ແລະ ການຈ່າຍເງິນປົກປ້ອງ

**1.** ສຳນັກງານປົກປ້ອງເງິນຝາກ ຕ້ອງຈ່າຍເງິນປົກປ້ອງເປັນສະກຸນເງິນກີບ ຕາມວົງເງິນປົກປ້ອງສູງສຸດ ຊຶ່ງຕ້ອງໄດ້ຫັກລົບໜີ້ (ຖ້າມີ). ເງິນຝາກທີ່ເປັນສະກຸນເງິນຕາຕ່າງປະເທດທັງໝົດ ຕ້ອງຄິດໄລ່ທຽບເທົ່າເປັນສະກຸນເງິນກີບ ໂດຍອີງໃສ່ອັດຕາແລກປ່ຽນ (ອັດຕາຊື້) ທີ່ທະນາຄານແຫ່ງ ສປປ ລາວ ກຳນົດໃນວັນສຸດທ້າຍຂອງການດຳເນີນທຸລະກິດຂອງສະມາຊິກທີ່ຢູ່ໃນສະພາວະລົ້ມລະລາຍ;

**2.** ສຳລັບບັນຊີຮ່ວມ ທີ່ມີເຈົ້າຂອງບັນຊີເງິນຝາກນັບແຕ່ 2 ຄົນຂຶ້ນໄປ, ການຈ່າຍເງິນປົກປ້ອງ ຕ້ອງອີງຕາມສັດສ່ວນທີ່ໄດ້ລະບຸໄວ້ໃນບັນຊີຮ່ວມ ຫຼື ເອກະສານອື່ນທີ່ກ່ຽວຂ້ອງທີ່ມີການສະແດງຫຼັກຖານການເປັນເຈົ້າຂອງ

ບັນຊີ. ໃນກໍລະນີບໍ່ສາມາດກໍານົດສັດສ່ວນກໍາມະສິດ ຂອງບັນດາເຈົ້າຂອງບັນຊີຮ່ວມ, ສໍານັກງານປົກປ້ອງເງິນຝາກຕ້ອງແບ່ງປັນເງິນຝາກໃນສັດສ່ວນເທົ່າກັນ.

ສັດສ່ວນການຖືບັນຊີຂອງຜູ້ຝາກເງິນແຕ່ລະລາຍທີ່ມີໃນບັນຊີຮ່ວມ ຕ້ອງລວມເຂົ້າກັນກັບບັນຊີເງິນຝາກອື່ນ ຂອງຜູ້ຝາກເງິນທີ່ກ່ຽວຂ້ອງ ເພື່ອເປັນການກໍານົດຈໍານວນເງິນປົກປ້ອງ ທີ່ຕ້ອງຈ່າຍຕາມວົງເງິນປົກປ້ອງສູງສຸດ ທີ່ກໍານົດໄວ້.

ໃນກໍລະນີ ເປັນບັນຊີເງິນຝາກຂອງຜູ້ບໍລິຫານ ຫຼື ຜູ້ຖືຮຸ້ນລາຍໃຫຍ່ຂອງສະມາຊິກທີ່ໄດ້ຝາກຮ່ວມກັບບຸກຄົນອື່ນ ຕ້ອງຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນທີ່ໄດ້ຮັບການປົກປ້ອງເທົ່ານັ້ນ ໂດຍຈ່າຍຕາມວົງເງິນປົກປ້ອງສູງສຸດທີ່ກໍານົດໄວ້. ສໍາລັບເງິນຝາກຂອງຜູ້ບໍລິຫານ ຫຼື ຜູ້ຖືຮຸ້ນລາຍໃຫຍ່ບໍ່ໄດ້ຮັບການປົກປ້ອງ;

**3.** ເງິນຝາກຂອງຜູ້ຝາກເງິນທີ່ເສຍຊີວິດ ໄດ້ຮັບເງິນປົກປ້ອງຕາມວົງເງິນປົກປ້ອງສູງສຸດທີ່ກໍານົດໄວ້ ໂດຍຈ່າຍໃຫ້ຜູ້ສືບທອດມູນມໍລະດົກ ທີ່ມີສິດຄົບຖ້ວນຖືກຕ້ອງຕາມກົດໝາຍ ຊຶ່ງຈະໄດ້ຮັບເງິນປົກປ້ອງຕາມແຕ່ລະກໍລະນີດັ່ງນີ້:

**3.1** ຜູ້ຝາກເງິນທີ່ເສຍຊີວິດ ກ່ອນວັນສຸດທ້າຍຂອງການດໍາເນີນທຸລະກິດຂອງສະມາຊິກ, ຈໍານວນເງິນປົກປ້ອງຂອງຜູ້ຝາກເງິນທີ່ເສຍຊີວິດ ຕ້ອງບວກເຂົ້າກັບເງິນຝາກຂອງຜູ້ສືບທອດມູນມໍລະດົກຂອງຜູ້ກ່ຽວ (ຖ້າມີ) ເພື່ອກໍານົດຈໍານວນເງິນປົກປ້ອງ. ກໍລະນີມີຜູ້ສືບທອດມູນມໍລະດົກຫຼາຍຄົນ ສໍານັກງານປົກປ້ອງເງິນຝາກຈະຈ່າຍເງິນປົກປ້ອງໃຫ້ຜູ້ສືບທອດມູນມໍລະດົກ ໂດຍແບ່ງປັນຈໍານວນເງິນຝາກຂອງຜູ້ເສຍຊີວິດໃຫ້ແຕ່ລະຄົນໃນສັດສ່ວນທີ່ເທົ່າກັນ ແລະ ຈ່າຍຕາມວົງເງິນປົກປ້ອງສູງສຸດທີ່ກໍານົດໄວ້ໃນລະບຽບການ;

**3.2** ຜູ້ຝາກເງິນທີ່ເສຍຊີວິດ ຫຼັງວັນສຸດທ້າຍຂອງການດໍາເນີນທຸລະກິດຂອງສະມາຊິກ, ສິດຂອງຜູ້ຝາກເງິນທີ່ເສຍຊີວິດຕໍ່ກັບຈໍານວນເງິນປົກປ້ອງ ຈະຖືກໂອນໃຫ້ຜູ້ສືບທອດມູນມໍລະດົກຂອງຜູ້ກ່ຽວທີ່ຖືກຕ້ອງຕາມ ກົດໝາຍ. ກໍລະນີມີຜູ້ສືບທອດມູນມໍລະດົກຫຼາຍຄົນ ສໍານັກງານປົກປ້ອງເງິນຝາກຈະຈ່າຍເງິນປົກປ້ອງ ໃຫ້ຜູ້ສືບທອດມູນມໍລະດົກ ໂດຍແບ່ງປັນຈໍານວນເງິນປົກປ້ອງຂອງຜູ້ເສຍຊີວິດໃຫ້ແຕ່ລະຄົນໃນສັດສ່ວນທີ່ເທົ່າກັນ ແລະ ຈໍານວນເງິນປົກປ້ອງຈະຖືກຄິດໄລ່ຕ່າງຫາກຈາກເງິນປົກປ້ອງຂອງຜູ້ສືບທອດມູນມໍລະດົກ;

**4.** ຜູ້ຝາກເງິນທີ່ຝາກເງິນໄວ້ນໍາສະມາຊິກທີ່ມີການຄວບກິດຈະການເຂົ້າກັນ ຈະໄດ້ຮັບເງິນປົກປ້ອງແຕ່ລະກໍລະນີດັ່ງນີ້:

**4.1** ໃນກໍລະນີ ສະມາຊິກໄດ້ຄວບກິດຈະການເຂົ້າກັນໜຶ່ງປີລົງມາ ຢູ່ໃນສະພາວະລົ້ມລະລາຍ, ສໍານັກງານປົກປ້ອງເງິນຝາກ ຈະຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນໜຶ່ງລາຍ ຕໍ່ສະມາຊິກແຕ່ລະແຫ່ງ ກ່ອນການຄວບກິດຈະການ ໃນວົງເງິນປົກປ້ອງສູງສຸດ ທີ່ໄດ້ກໍານົດໄວ້ໃນລະບຽບການ;

**4.2** ໃນກໍລະນີ ສະມາຊິກໄດ້ຄວບກິດຈະການເຂົ້າກັນໜຶ່ງປີຂຶ້ນໄປ ຢູ່ໃນສະພາວະລົ້ມລະລາຍ, ບັນຊີທັງໝົດຂອງຜູ້ຝາກເງິນທີ່ມີໃນສະມາຊິກແຕ່ລະແຫ່ງ ກ່ອນການຄວບກິດຈະການ ຈະຖືກລວມເຂົ້າກັນເປັນບັນຊີດຽວ ແລະ ສໍານັກງານປົກປ້ອງເງິນຝາກ ຈະຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນໜຶ່ງລາຍຕໍ່ສະມາຊິກດັ່ງກ່າວ ໃນວົງເງິນປົກປ້ອງສູງສຸດ ທີ່ໄດ້ກໍານົດໄວ້ໃນລະບຽບການ;

**5.** ການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ ຕ້ອງມີການຫັກລົບໜີ້ຕ່າງໆ ໂດຍຖືເອົາຂໍ້ມູນໜີ້ລ້າສຸດ ທີ່ຄະນະຄວບຄຸມສະໜອງໃຫ້ສໍານັກງານປົກປ້ອເງິນຝາກ. ພາຍຫຼັງສໍາເລັດການຫັກລົບໜີ້ຕ່າງໆ ຜູ້ຮ້ອງຂໍຈຶ່ງສາມາດຮັບເງິນປົກປ້ອງຕາມຈໍານວນເງິນຝາກທີ່ຍັງເຫຼືອໃນວົງເງິນປົກປ້ອງສູງສຸດທີ່ກໍານົດໄວ້. ກໍລະນີ ໜີ້ທັງໝົດຂອງຜູ້ຝາກເງິນ ມີຈໍານວນເທົ່າກັບ ຫຼື ສູງກວ່າ ເງິນຝາກທີ່ໄດ້ຮັບການປົກປ້ອງ, ຜູ້ຝາກເງິນດັ່ງກ່າວ ຈະບໍ່ໄດ້ຮັບເງິນປົກປ້ອງ;

6. ຮູບແບບການຈ່າຍເງິນປົກປ້ອງ ດຳເນີນການຈ່າຍຜ່ານສະຖາບັນການເງິນຕົວແທນ ຈະຕ້ອງປະຕິບັດຕາມຂັ້ນຕອນວິທີການທີ່ໄດ້ກຳນົດໃນຄຳແນະນຳສະບັບນີ້ ຫຼື ດ້ວຍວິທີການອື່ນ ຕາມການກຳນົດຂອງສຳນັກງານປົກປ້ອງເງິນຝາກ.

**V. ການຈັດຕັ້ງປະຕິບັດ**

ສຳນັກງານປົກປ້ອງເງິນຝາກ, ສະມາຊິກ, ຜູ້ຝາກເງິນ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ.

ສຳນັກງານປົກປ້ອງເງິນຝາກ ຕ້ອງສ້າງຄູ່ມືການຈ່າຍເງິນປົກປ້ອງ ເພື່ອອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ມີຄວາມລະອຽດ ແລະ ຊັດເຈນ.

**VI. ຜົນສັກສິດ**

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາບໍລິຫານ**
**ສຳນັກງານປົກປ້ອງເງິນຝາກ**

**ພຸດທະໄຊ ສີວິໄລ**